## ບົດຮຽນ 25 - ຍຸກແຫ່ງພຣະຄຸນ - ພາກທີ 3

ໃນບົດຮຽນນີ້ ພວກເຮົາຈະສຶກສາສິບຂໍ້ທຳອິດໃນຄາລາເຕຍບົດທີສອງ. ອີກເທື່ອຫນຶ່ງ, ພວກເຮົາຈະສຶກສາລາຍລະອຽດບາງຢ່າງ ເພາະວ່າຂໍ້ນີ້ຈະເປັນປະໂຫຍດຫຼາຍໃນການທຳຄວາມເຂົ້າໃຈກ່ຽວກັບຍຸກປະຈຸບັນ.

ຄວາມເປັນເອກະລາດຂອງໂປໂລຈາກຄຣິສຕະຈັກເຢຣູຊາເລັມ

ພວກເຮົາສາມາດເຂົ້າໃຈບົດທີ 2 ຂອງຄາລາເຕຍໄດ້ດີກວ່າ ຖ້າພວກເຮົາກັບຄືນໄປເບິ່ງບົດທີຫນຶ່ງ. ອັນນີ້ຈະຊ່ວຍໃຫ້ພວກເຮົາເຂົ້າໃຈບໍລິບົດຂອງພຣະຄໍາພີທີ່ພວກເຮົາຈະສຶກສາໃນບົດທີສອງ. ກະລຸນາອ່ານຄາລາເຕຍບົດທີຫນຶ່ງ. ໃຫ້ສັງເກດວ່າ ໂປໂລກໍາລັງເຮັດຫຍັງເພື່ອໃຫ້ຄວາມເປັນເອກະລາດຂອງເພິ່ນຈາກອັກຄະສາວົກສິບສອງຄົນ. ເມື່ອເວົ້າກ່ຽວກັບຫນັງສືຂ່າວປະເສີດຂອງເພິ່ນ, ເພິ່ນຂຽນໃນຂໍ້ທີ 12: "ດ້ວຍວ່າ ເຮົາບໍ່ໄດ້ຮັບຂ່າວປະເສີດນັ້ນຈາກມະນຸດ ຫລືບໍ່ມີມະນຸດຄົນໃດສອນເຮົາ ແຕ່ເຮົາໄດ້ຮັບຂ່າວນັ້ນໂດຍພຣະເຢຊູຄຣິດເຈົ້າຊົງສຳແດງໃຫ້ແກ່ເຮົາ." ໂປໂລບໍ່ໄດ້ຮັບຂ່າວປະເສີດຈາກອັກຄະສາວົກສິບສອງຄົນ. ໃນຂໍ້ທີ 17 ລາວຂຽນວ່າ: "ແມ່ນແຕ່ພວກທີ່ເປັນອັກຄະສາວົກກ່ອນເຮົາໃນນະຄອນເຢຣູຊາເລັມ ເຮົາກໍຍັງບໍ່ໄດ້ໄປຫາ ແຕ່ເຮົາໄດ້ໄປເຖິງອາຣາເບຍໃນທັນທີ ແລ້ວຈຶ່ງກັບຄືນມາເມືອງດາມັສກັດ." ພວກເຮົາເຫັນໄດ້ວ່າ ທັນທີທີ່ໂປໂລກັບໃຈເຊື່ອ ເພິ່ນບໍ່ໄດ້ໄປໃຊ້ເວລາກັບພວກອັກຄະສາວົກສິບສອງທັນທີໂລດ. ໃນທີ່ສຸດ, ໃນຂໍ້ທີ 22 ລາວຂຽນວ່າ: "ສ່ວນສະມາຊິກໃນຄຣິສຕະຈັກທັງຫລາຍທີ່ແຂວງຢູດາຍນັ້ນ ຍັງບໍ່ໄດ້ຮູ້ຈັກຫນ້າຂອງເຮົາ." ໂປໂລໄດ້ບອກຄວາມຈິງທີ່ວ່າ ລາວໄດ້ໃຊ້ເວລາພຽງເລັກນ້ອຍໃນເຢຣູຊາເລັມ (ບ່ອນທີ່ອັກຄະສາວົກສິບສອງຄົນຢູ່). ຄຣິສຕະຈັກຕ່າງໆ ໃນແຂວງຢູດາຍຍັງບໍ່ຮູ້ ແລະ ເຫັນວ່າ ຮູບຮ່າງຫນ້າຕາຂອງໂປໂລເປັນແນວໃດ.

ຄາລາເຕຍ 2:1-10

ຂໍ້ທີ 1-2

> "ຫຼັງຈາກນັ້ນມາສິບສີ່ປີ ເຮົາໄດ້ກັບຄືນໄປທີ່ນະຄອນເຢຣູຊາເລັມກັບບາຣະນາບາ ແລະເຮົາກໍໄດ້ເອົາຕີໂຕໄປດ້ວຍ. ເຮົາໄດ້ໄປຕາມທີ່ພຣະເຈົ້າຊົງສຳແດງແກ່ເຮົາ, ເຮົາໄດ້ອະທິບາຍເລື່ອງຂ່າວປະເສີດແກ່ພວກເຂົາ ຊຶ່ງເຮົາໄດ້ເຄີຍປະກາດແກ່ຄົນຕ່າງຊາດ, ແຕ່ຍັງໄດ້ເລົ່າໃຫ້ຄົນສຳຄັນຟັງເປັນການສ່ວນຕົວ ເພາະຢ້ານວ່າ ເຮົາກຳລັງແລ່ນແຂ່ງຂັນ ຫລືວ່າໄດ້ແລ່ນແຂ່ງແລ້ວໂດຍບໍ່ມີປະໂຫຍດ."

ໂປໂລເລີ່ມບົດທີສອງໂດຍການບອກກ່ຽວກັບການເດີນທາງໄປເມືອງເຢຣູຊາເລມ.
ປາກົດວ່າ ມີບາງຄົນທີ່ເວົ້າວ່າ ໂປໂລຢູ່ພາຍໃຕ້ສິດອຳນາດຂອງອັກຄະສາວົກສິບສອງຄົນ ແລະ ເວົ້າວ່າລາວໄດ້ໄປນະຄອນເຢຣູຊາເລັມ ເພື່ອຍື່ນສະເຫນີຕໍ່ອຳນາດຂອງພວກອັກຄະສາວົກທັງສິບສອງຄົນ. ແຕ່ຜູ້ທີ່ເວົ້າຂໍ້ຄວາມນີ້ແມ່ນຄູສອນປອມ. ໂປໂລບອກພວກເຮົາວ່າ ລາວ "ໄປຕາມທີ່ພຣະເຈົ້າຊົງສຳແດງແກ່ຕົນ." ລາວບໍ່ໄດ້ໄປນະຄອນເຢຣູຊາເລັມເພາະວ່າ ອັກຄະສາວົກສິບສອງຄົນບອກໃຫ້ລາວໄປ. ລາວໄປນະຄອນເຢຣູຊາ

ເລັມ ເພາະພຣະເຢຊູຄຣິດໄດ້ບອກໃຫ້ລາວໄປ. ການເດີນທາງໄປນະຄອນເຢຣູຊາເລັມຂອງລາວບໍ່ແມ່ນໄປເພື່ອ ຂໍຕໍາແໜ່ງໃດໜຶ່ງຈາກອັກຄະສາວົກສິບສອງຄົນ.

ບາງຄົນຄິດວ່າ ໂປໂລໄດ້ໄປນະຄອນເຢຣູຊາເລັມ ເພື່ອໃຫ້ອັກຄະສິບສອງຄົນສອນລາວ. ອັນນີ້ແມ່ນບໍ່ຖືກຕ້ອງ. ໂປໂລຂຽນວ່າ: "ເຮົາໄດ້ອະທິບາຍເລື່ອງຂ່າວປະເສີດແກ່ພວກເຂົາ ຊຶ່ງເຮົາໄດ້ເຄີຍປະກາດແກ່ຄົນຕ່າງຊາດ." ລາວໄປເພື່ອບອກອັກຄະສາວົກສິບສອງຄົນກ່ຽວກັບຂ່າວປະເສີດທີ່ລາວປະກາດນັ້ນ, ບໍ່ແມ່ນເພື່ອຮຽນຮູ້ຈາກພວກເຂົາ. ແຕ່ໂປໂລໄດ້ສອນພວກສາວົກສິບສອງຄົນ, ແທນທີ່ຈະໃຫ້ພວກເຂົາສອນເພິ່ນ.

ບາງຄົນໃຫ້ຄວາມເຫັນວ່າ ໂປໂລໄປເມືອງເຢຣູຊາເລັມເພື່ອກວດວ່າຂ່າວປະເສີດຂອງລາວ ແລະ ຂອງອັກຄະສາວົກທັງສິບສອງຄົນນັ້ນແມ່ນອັນດຽວກັນຫຼືບໍ່. ອັນນີ້ບໍ່ແມ່ນຄວາມຈິງ! ໂປໂລຂຽນວ່າ ລາວໄດ້ໄປຫາພວກເຂົາ "ເປັນການສ່ວນຕົວ ເພາະຢ້ານວ່າເຮົາກໍາລັງແລ່ນແຂ່ງຂັນ ຫລືວ່າໄດ້ແລ່ນແຂ່ງແລ້ວໂດຍບໍ່ມີປະໂຫຍດ." ເມື່ອໂປໂລໄປຮອດນະຄອນເຢຣູຊາເລັມ, ເພິ່ນໄດ້ໄປຫາເປໂຕ, ຢາໂກໂບ ແລະ ໂຢຮັນເປັນການສ່ວນຕົວ. ໂປໂລບໍ່ໄດ້ເປັນຫ່ວງວ່າ ລາວໄດ້ປະກາດຂ່າວປະເສີດທີ່ແຕກຕ່າງກັນຫຼືບໍ່ (ຫຼືຂ່າວປະເສີດປອມ). ລາວຮູ້ວ່າ ຂ່າວປະເສີດທີ່ລາວປະກາດຕ່າງຈາກຂ່າວປະເສີດທີ່ພວກອັກຄະສາວົກສິບສອງຄົນປະກາດ ແລະ ລາວຮູ້ວ່າ ມັນເປັນຂ່າວປະເສີດທີ່ແທ້ຈິງສໍາລັບຍຸກນີ້. ຄວາມກັງວົນຂອງລາວຄື ຜູ້ທີ່ເຊື່ອຊາວຢິວອາດຈະປະຕິເສດຂ່າວປະເສີດທີ່ລາວປະກາດ. ອັນນີ້ຈະເຮັດໃຫ້ເກີດບັນຫາຫຼາຍສໍາລັບໂປໂລໃນການເຮັດພັນທະກິດຂອງຕົນ. ລາວເປັນຫ່ວງວ່າ ການປະກາດຂອງລາວຈະເປັນການ "ໄຮ້ປະໂຫຍດ." ຖ້າຄຣິສຕະຈັກເຢຣູຊາເລັມ ແລະ ອັກຄະສາວົກສິບສອງຄົນຕໍ່ຕ້ານໂປໂລ, ມັນຈະເຮັດໃຫ້ປະຊາຊົນຈໍານວນຫຼາຍຫັນໜີຈາກຂ່າວປະເສີດແຫ່ງພຣະຄຸນ.

ຂໍ້ທີ 3-5

"ເພື່ອນຮ່ວມເດີນທາງກັບເຮົາຄືຕີໂຕ ເຖິງແມ່ນວ່າລາວເປັນຄົນກຣີກກໍຕາມ ລາວກໍບໍ່ຖືກບັງຄັບໃຫ້ຮັບພິທີຕັດ ແຕ່ມີພີ່ນ້ອງທີ່ແປກປອມທີ່ລັກລອບເຂົ້າມາ ເພື່ອຈະແນມເບິ່ງເສລີພາບຂອງພວກເຂົາທີ່ມີຢູ່ເພາະພຣະເຢຊູຄຣິດເຈົ້າ ພວກເຂົາຫວັງຈະບັງຄັບພວກເຮົາໃຫ້ກັບໄປເປັນຂ້ອຍຂ້າຂອງກົດບັນຍັດອີກແຕ່ພວກເຮົາບໍ່ໄດ້ອ່ອນຍອມຕໍ່ພວກເຂົາແມ່ນແຕ່ນາທີດຽວ ເພື່ອຈະໄດ້ຮັກສາຄວາມສັດຈິງຂອງຂ່າວປະເສີດນັ້ນໄວ້ສໍາລັບເຈົ້າທັງຫລາຍ." ເປັນຫຍັງໂປໂລຈຶ່ງພາຕີໂຕໄປເມືອງເຢຣູຊາເລມ? ອັນນີ້ແມ່ນການເດີນທາງທີ່ທ້າທາຍຫຼາຍ ເພາະຕີໂຕເປັນຄົນຕ່າງຊາດທີ່ບໍ່ໄດ້ຮັບພິທີຕັດ. ມີການໂຕ້ຖຽງກັນກ່ຽວກັບພິທີຕັດ (ພຣະບັນຍັດ) ແລະຂ່າວປະເສີດແຫ່ງພຣະຄຸນຂອງໂປໂລ. ຕີໂຕຈະກາຍເປັນໂຕທົດສອບວ່າ ໂປໂລຈະເຫັນດີໃຫ້ລາວຮັບພິທີຕັດຕາມຄວາມຕ້ອງການຂອງຄົນຕ່າງຊາດຫຼືບໍ່. ໂດຍການນໍາຕີໂຕມາ, ໂປໂລແນ່ໃຈວ່າ ໃນການຢ້ຽມຢາມຂອງເພິ່ນ ຈະຕ້ອງມີບັນຫານີ້ປະກົດຂຶ້ນແນ່ນອນ. ຊາວຢິວຈະບັງຄັບໂປໂລໃຫ້ຢູ່ໃຕ້ສິດຂອງພວກເຂົາ ແລະ ຂ່າວປະເສີດຂອງພວກເຂົາໂດຍການໃຫ້ຕີໂຕຮັບພິທີຕັດ?

ການມາຍັງກຸງເຢຣູຊາເລັມຂອງໂປໂລໄດ້ເຮັດໃຫ້ເກີດແຂ່ງຂັນລະຫວ່າງຄວາມຮຽກຮ້ອງຂອງຜູ້ທີ່ເຊື່ອຜິດໆ ແລະ ຄວາມຈິງຂອງຂ່າວປະເສີດທີ່ໂປໂລປະກາດ. ໂປໂລບໍ່ເຊື່ອວ່າ ການຮັບພິທີຕັດເປັນບັນຫາໃຫຍ່. ຖ້າໂປໂລເຮັດຕາມຄວາມປາດຖະໜາຂອງຊາວຢິວ, ຈະເກີດຫຍັງ? ການເຮັດຕາມຄວາມຕ້ອງການຂອງຊາວຢິວກໍຈະຫຼີກລ້ຽງການປະເຊີນໜ້າໄດ້. ແຕ່ໂປໂລໄດ້ປະຕິເສດທີ່ຈະປະຖິ້ມຂ່າວປະເສີດແຫ່ງພຣະຄຸນເພື່ອຍອມອ່ອນຕໍ່ພຣະບັນຍັດ . ໃນຄາລາເຕຍ 5:2-3 ໂປໂລໄດ້ສອນວ່າ ຜູ້ທີ່ຮັບພິທີຕັດກໍຕ້ອງຖືຮັກສາພຣະບັນຍັດທັງໝົດດ້ວຍ. ແລ້ວຂ່າວປະເສີດແຫ່ງພຣະຄຸນຈະມີຄວາມຫມາຍຫຍັງ (ໄຮ້ປະໂຫຍດ). ໂປໂລ ແລະ ຕີໂຕປະຕິເສດທີ່ຈະປະຖິ້ມເສລີພາບຂອງພວກເຂົາທີ່ມີໃນພຣະຄຣິດ ແລະ ບໍ່ຍອມຢູ່ໃຕ້ການເປັນທາດຂອງພຣະບັນຍັດ. ຂອບໃຈຫຼາຍໆ ທີ່ໂປໂລສັດຊື່ຕໍ່ຂ່າວປະເສີດທີ່ລາວປະກາດ "ຄວາມຈິງຂອງຂ່າວປະເສີດຈະສືບຕໍ່ກັບທ່ານ."

ຂໍ້ 6

"ສ່ວນຄົນເຫຼົ່ານັ້ນ ທີ່ພວກເຂົາຖືວ່າເປັນຄົນສຳຄັນ (ພວກເຂົາຈະເຄີຍເປັນຄົນຢ່າງໃດມາກ່ອນແລ້ວກໍຕາມກໍບໍ່ສຳຄັນຢ່າງໃດສຳລັບເຮົາ) ພຣະເຈົ້າບໍ່ຊົງເຫັນແກ່ໜ້າຄົນໃດ ຄົນເຫຼົ່ານັ້ນທີ່ພວກເຮົາຖືວ່າ ເປັນຄົນສຳຄັນກໍບໍ່ໄດ້ເພີ່ມເຕີມສິ່ງໃດສິ່ງໜຶ່ງແກ່ເຮົາ."

ເປໂຕ, ຢາໂກໂບ ແລະ ໂຢຮັນແມ່ນ "ຜູ້ທີ່ຖືວ່າ ເປັນຄົນສຳຄັນ." ພວກເຂົາມີຊື່ສຽງຫຼາຍໃນຖານະຜູ້ນຳຂອງຄຣິສຕະຈັກເຢຣູຊາເລັມ. ແຕ່ອັກຄະສາວົກຜູ້ຍິ່ງໃຫຍ່ເຫຼົ່ານີ້ຍັງບໍ່ຮູ້ບາງຢ່າງ. ພວກເຂົາຍັງບໍ່ທັນໄດ້ຮູ້ຈັກຂ່າວປະເສີດທີ່ຊົງເປີດເຜີຍຕໍ່ໂປໂລ. ເປໂຕ, ຢາໂກໂບ ແລະ ໂຢຮັນເປັນທີ່ຮູ້ຕັກຫຼາຍກວ່າໂປໂລ, ແຕ່ພວກເຂົາບໍ່ໄດ້ຮູ້ໃນສິ່ງທີ່ໂປໂລຮູ້.

ໂປໂລບໍ່ໄດ້ປະທັບໃຈກັບມະນຸດ ("ບໍ່ວ່າພວກເຂົາຈະເຄີຍເປັນຄົນຢ່າງໃດມາກ່ອນກໍຕາມ ກໍບໍ່ສຳຄັນຢ່າງໃດສຳລັບເຮົາ"). ລາວກ່າວວ່າ ເປໂຕ, ຢາໂກໂບ ແລະ ໂຢຮັນ "ບໍ່ໄດ້ເພີ່ມເຕີມສິ່ງໃດສິ່ງໜຶ່ງແກ່ລາວ." ພວກເຂົາບໍ່ໄດ້ສອນໂປໂລຫຍັງໃຫມ່ ຫຼືປ່ຽນແປງຄຳສອນຂອງໂປໂລໃນທາງໃດເລີຍ. ໂປໂລຮູ້ວ່າ ເພິ່ນຈຳເປັນຕ້ອງສອນອັກຄະສາວົກສິບສອງຄົນນີ້. ດັ່ງນັ້ນ, ຫຼັງຈາກສຳເລັດການປະຊຸມໃນເມືອງເຢຣູຊາເລັມແລ້ວ, ໂປໂລໄດ້ກ່າວຕຳນິເປໂຕໃນທີ່ສາທາລະນະ ແລະຕໍ່ໜ້າເປໂຕ (ຄາລາເຕຍ 2:11-14). ເປໂຕ, ຢາໂກໂບ ແລະ ໂຢຮັນຕ້ອງໄດ້ຍິນຂ່າວປະເສີດຂອງໂປໂລ ແລະ ຍອມຮັບສິດອຳນາດຂອງເພິ່ນ ໃນຖານະທີ່ເປັນ "ອັກຄະສາວົກຂອງຄົນຕ່າງຊາດ" (ໂຣມ 11:13).

ຂໍ້ທີ 7-8

"ແຕ່ກົງກັນຂ້າມ ເມື່ອພວກເຂົາເຫັນວ່າ ພຣະເຈົ້າໄດ້ມອບພາລະກິດໃຫ້ເຮົາ ເພື່ອປະກາດຂ່າວປະເສີດແກ່ຄົນຕ່າງຊາດ ເໝືອນດັ່ງທີ່ພຣະອົງໄດ້ມອບພາລະກິດໃຫ້ເປໂຕ ເພື່ອປະກາດຂ່າວປະເສີດແກ່ຄົນຢິວ; (ດ້ວຍ

ວ່າ, ພຣະເຈົ້າໃຫ້ເປໂຕເປັນອັກຄະສາວົກແກ່ຄົນຢິວຢ່າງໃດ ພຣະອົງກໍໃຫ້ເຮົາເປັນອັກຄະສາວົກແກ່ຄົນຕ່າງຊາດຢ່າງນັ້ນ:)"

ໃນຂໍ້ທີຫົກ, ພວກເຮົາໄດ້ຮຽນຮູ້ວ່າ ເປໂຕ, ຢາໂກໂບ ແລະ ໂຢຮັນບໍ່ໄດ້ສອນຫຍັງຫຍັງເພີ່ມເຕີມແກ່ໂປໂລເລີຍ (ບໍ່ໄດ້ສອນຄວາມຈິງໃໝ່ໃຫ້ລາວ ຫລື ປ່ຽນແປງຂ່າວປະເສີດຂອງລາວ). ບັດນີ້ ໂປໂລເວົ້າວ່າ "ແຕ່ກົງກັນຂ້າມ." ອີກດ້ານໜຶ່ງ, ໂປໂລໄດ້ສອນຫຍັງບາງຢ່າງໃຫ້ພວກອັກຄະສາວົກໃນເມືອງເຢຣູຊາເລັມ. ໂປໂລໄດ້ສອນພວກເຂົາກ່ຽວກັບການເປີດເຜີຍຄວາມເລິກລັບທີ່ລາວໄດ້ຮັບຈາກພຣະເຢຊູຄຣິດ (ໂຣມ 16:25-26; ໂກໂລຊາຍ 1:24-26). ພວກອັກຄະສາວົກທີ່ມີຊື່ສຽງກັບກາຍເປັນລູກສິດຂອງໂປໂລ ແລະ ຮຽນຮູ້ຍຸກໃໝ່ທີ່ຊົງມອບໃຫ້ແກ່ເພິ່ນ.

ຈາກຄຳເວົ້າຂອງພວກອັກຄະສາວົກ, ຈຶ່ງເຮັດໃຫ້ເຫັນວ່າ ເປໂຕ, ຢາໂກໂບ ແລະ ໂຢຮັນ ຮູ້ແນ່ນອນວ່າ ພຣະເຈົ້າໄດ້ມອບຂ່າວປະເສີດໃໝ່ໃຫ້ໂປໂລ. ເປໂຕໄດ້ຮັບເອົາຂ່າວປະເສີດເລື່ອງການຮັບສິນຕັດ ໃນຂະນະທີ່ຂ່າວປະເສີດຂອງໂປໂລຕ່າງອອກໄປ, ຄືຂ່າວປະເສີດທີ່ບໍ່ຕ້ອງຖືພິທີຕັດ. ເຖິງແມ່ນຫລາຍຄົນຈະສອນວ່າ ມີຂ່າວປະເສີດອັນດຽວໃນພຣະຄຳພີ. ພວກເຮົາສາມາດເຫັນໄດ້ວ່າ ມັນບໍ່ແມ່ນຄວາມຈິງ. ຂ່າວປະເສີດທີ່ໂປໂລປະກາດແມ່ນຕ່າງຈາກຂ່າວປະເສີດທີ່ເປໂຕປະກາດ. ພວກອັກຄະສາວົກຍັງຮັບຮູ້ວ່າ ເປໂຕ ແລະ ໂປໂລມີຄວາມເປັນອັກຄະສາວົກທີ່ຕ່າງກັນ. ເປໂຕເປັນອັກຄະສາວົກແກ່ພວກຖືພິທີຕັດ. ໂປໂລເປັນອັກຄະສາວົກແກ່ຄົນຕ່າງຊາດ.

ຂໍ້ທີ 9-10

"ເມື່ອຢາໂກໂບກັບກາຟາ ແລະ ໂຢຮັນ, ຜູ້ທີ່ພວກເຂົາຖືວ່າ ເປັນຫລັກ ໄດ້ສັງເກດເຫັນພຣະຄຸນທີ່ໄດ້ຊົງປະທານແກ່ເຮົາ ທ່ານທັງສາມກໍໄດ້ຍື່ນມືຂວາໃຫ້ເຮົາກັບບາຣະນາບາຈັບ ເພື່ອສະແດງວ່າ ເຮົາເປັນເພື່ອນຮ່ວມງານກັນ ເພື່ອໃຫ້ພວກເຮົາໄປຫາຄົນຕ່າງຊາດ ແລະ ທ່ານເຫຼົ່ານັ້ນຈະໄປຫາພວກທີ່ຖືພິທີຕັດ ແຕ່ທ່ານເຫຼົ່ານັ້ນ ຂໍພຽງແຕ່ບໍ່ໃຫ້ເຮົາລືມຄິດເຖິງຄົນຍາກຈົນ ຊຶ່ງເປັນສິ່ງທີ່ເຮົາເອົາໃຈໃສ່ທີ່ຈະເຮັດຢູ່ແລ້ວ."

ໃນທີ່ສຸດ ພວກອັກຄະສາວົກກໍເຂົ້າໃຈວ່າ ມີສອງພາລະກິດທີ່ຕ່າງກັນ. ເປໂຕ, ຢາໂກໂບ ແລະ ໂຢຮັນ ຕອນນີ້ຈະໄປຫາພວກທີ່ຖືພິທີຕັດ ແລະໂປໂລຈະໄປຫາຄົນຕ່າງຊາດ. ພວກອັກຄະສາວົກໄດ້ເຮັດຂໍ້ຕົກລົງຢ່າງເປັນທາງການຕໍ່ກັນແລະກັນ ("ພວກເຂົາທັງສາມກໍໄດ້ຍື່ນມືຂວາໃຫ້ເຮົາກັບບາຣະນາບາຈັບ ເພື່ອສະແດງວ່າເຮົາເປັນເພື່ອນຮ່ວມງານກັນ"). ຫຼັງຈາກໄດ້ຕົກລົງກັນແບບນີ້ ພວກອັກຄະສາວົກໃນເມືອງເຢຣູຊາເລັມໄດ້ຂໍອັນໜຶ່ງກັບໂປໂລ. ພວກເຂົາຂໍໃຫ້ລາວຄິດເຖິງຄວາມຂັດສົນຂອງຜູ້ທີ່ເຊື່ອຜູ້ທຸກຍາກໃນພັນທະກິດຮັບໃຊ້ຂອງເພິ່ນໃນເຢຣູຊາເລັມ. ສິ່ງສຳຄັນຄືໃຫ້ພວກເຮົາສັງເກດວ່າ ເປໂຕ, ຢາໂກໂບ ແລະ ໂຢຮັນບໍ່ມີສິດອຳນາດທີ່ຈະສັ່ງໂປໂລໃຫ້ເຮັດສິ່ງນີ້. ພວກເຂົາໄດ້ພຽງແຕ່ຮ້ອງຂໍລາວເທົ່ານັ້ນ. ໂປໂລຂຽນວ່າ, "ຊຶ່ງເປັນສິ່ງທີ່ເຮົາເອົາໃຈໃສ່ທີ່ຈະເຮັດຢູ່ແລ້ວ." ໂປໂລໄດ້ປະຕິບັດຕາມການຮ້ອງຂໍຂອງພວກເຂົາ, ບໍ່ແມ່ນຈຳໃຈເຮັດຕາມ

ຄຳສັ່ງ, ແຕ່ເພິ່ນເຕັມໃຈທີ່ຈະເຮັດຢ່າງນັ້ນຢູ່ແລ້ວ. ລາວມີຄວາມປະສົງແບບນີ້ຢູ່ໃນໃຈແລ້ວ. ດັ່ງນັ້ນ, ນອກຈາກຄຳຮ້ອງຂໍນີ້ແລ້ວ, ພວກອັກຄະສາວົກໃນເມືອງເຢຣູຊາເລັມກໍບໍ່ໄດ້ເພີ່ມຫຍັງໃໝ່ກັບຂ່າວປະເສີດ ຫຼື ພາລະກິດທີ່ໂປໂລໄດ້ຮັບມອບໝາຍເລີຍ.

ອັກຄະສາວົກທຸກຄົນຮັບຮູ້ວ່າມີ:

ກ) ສອງຂ່າວປະເສີດທີ່ແຕກຕ່າງກັນ;

ຂ) ການເປັນອັກຄະສາວົກສອງຢ່າງທີ່ແຕກຕ່າງກັນ; ແລະ

ຄ) ສອງພາລະກິດທີ່ແຕກຕ່າງກັນ.

ນອກຈາກນີ້, ພວກເຮົາຕ້ອງຮັບຮູ້ຄວາມຈິງຂໍ້ນີ້ ຖ້າພວກເຮົາຕ້ອງການເຂົ້າໃຈພຣະຄຳພີ ແລະ ດຳລົງຊີວິດຕາມພຣະປະສົງຂອງພຣະເຈົ້າ. ຄວາມເຂົ້າໃຈ ແລະ ການຍຶດໝັ້ນໃນຂ່າວປະເສີດທີ່ຊົງມອບໃຫ້ແກ່ໂປໂລແມ່ນກຸນແຈເພື່ອເຂົ້າໃຈຫຼັກຄຳສອນໃນພຣະຄຳພີ ແລະ ຄວາມມີໄຊໃນການດຳເນີນກັບພຣະຜູ້ເປັນເຈົ້າ.

[ໃນບົດຮຽນຕໍ່ໄປ ພວກເຮົາຈະຮຽນຮູ້ການສິ້ນສຸດຍຸກແຫ່ງພຣະຄຸນ.]

<u>ຄຳຖາມທວນຄືນ ບົດຮຽນ 25 - ຍຸກແຫ່ງພຣະຄຸນ - ພາກທີ 3</u>

<u>ຖືກ ຫຼື ຜິດ</u>

1. ໃນຄາລາເຕຍບົດທີໜຶ່ງ, ໂປໂລໄດ້ເນັ້ນໜັກເຖິງຄວາມເປັນເອກະລາດຂອງເພິ່ນຈາກອັກຄະສາວົກສິບສອງຄົນ.

2. ໂປໂລຂຽນໃນຄາລາເຕຍບົດທີ 2 ກ່ຽວກັບການເດີນທາງໄປຍັງກຸງໂຣມຂອງເພິ່ນ.

3. ໂປໂລໄປເມືອງເຢຣູຊາເລມເພື່ອໃຫ້ແນ່ໃຈວ່າ ລາວກຳລັງປະກາດຂ່າວປະເສີດທີ່ຄືກັນກັບຂ່າວປະເສີດຂອງເປໂຕຫຼືບໍ່.

4. ໂປໂລໄດ້ພາຕີໂຕໄປນະຄອນເຢຣູຊາເລັມກັບລາວ ເພື່ອໃຫ້ຕີໂຕໄດ້ຮັບພິທີຕັດ.

<u>ຄຳຖາມແບບປາລະໄນ</u>

5. ໃນຄາລາເຕຍ 2:6 ໂປໂລຂຽນກ່ຽວກັບຜູ້ທີ່ "ຖືວ່າເປັນຄົນສຳຄັນ." ລາວອ້າງເຖິງ:

ກ) ເປໂຕ, ຢາໂກໂບ ແລະ ໂຢຮັນ

ຂ) ໂມເຊ ແລະ ເອລີຢາ

ຄ) ຜູ້ປະກາດພຣະທຳໃນພຣະຄຳພີເດີມ

ງ) ຄູສອນປອມ

6. ໂປໂລໄດ້ປະຊຸມກັບເປໂຕ, ຢາໂກໂບ ແລະ ໂຢຮັນ. ຜົນຂອງກອງປະຊຸມຂອງພວກເຂົາແມ່ນ:

ກ) ເປໂຕ, ຢາໂກໂບ ແລະ ໂຢຮັນ ໄດ້ສອນຂ່າວປະເສີດແກ່ໂປໂລ

ຂ) ພວກອັກຄະສາວົກໄດ້ໃຈຮ້າຍໃສ່ກັນ ແລະບໍ່ສາມາດຕົກລົງກັນໄດ້

ຄ) ເປໂຕ, ຢາໂກໂບ ແລະ ໂຢຮັນບໍ່ໄດ້ເພີ່ມຫຍັງໃຫ້ກັບຂ່າວປະເສີດຂອງໂປໂລເລີຍ

ງ) ໂປໂລໄດ້ປ່ຽນແປງການສອນຂອງຕົນ ເພື່ອໃຫ້ມັນກົງກັບຂ່າວປະເສີດທີ່ເປໂຕປະກາດ

7. ໂປໂລບອກພວກອັກຄະສາວົກໃນເມືອງເຢຣູຊາເລັມເລື່ອງ:

ກ) ຄວາມຫມາຍທີ່ແທ້ຈິງຂອງພຣະຄຳພີເດີມ

ຂ) ຂ່າວປະເສີດທີ່ມອບໃຫ້ແກ່ລາວໂດຍການເປີດເຜີຍຂອງພຣະເຢຊູຄຣິດ

ຄ) ຂ່າວປະເສີດແຫ່ງອານາຈັກ

ງ) ການສະເດັດມາຄັ້ງທີສອງຂອງພຣະຄຣິດ

<u>ຕື່ມໃສ່ຊ່ອງຫວ່າງ</u>

8. ເປໂຕ ແລະ ໂປໂລ ທັງສອງເປັນອັກຄະສາວົກ, ແຕ່ພວກເຂົາມີ________________ທີ່ຕ່າງກັນ.

9. ພວກອັກຄະສາວົກໄດ້ຕົກລົງຮ່ວມກັນວ່າ ມີຂ່າວປະເສີດສອງຢ່າງທີ່ແຕກຕ່າງກັນ, ອັກຄະສາວົກສອງແບບແຕກຕ່າງກັນ, ແລະ _________.

10. ຄວາມເຂົ້າໃຈກ່ຽວກັບຂ່າວປະເສີດທີ່ມອບໃຫ້_________ແມ່ນມີຄວາມຈຳເປັນເພື່ອໃຫ້ເປັນທີ່ພໍພຣະໄທຂອງພຣະເຈົ້າ ແລະຮູ້ຈັກພຣະປະສົງຂອງພຣະອົງສຳລັບມື້ນີ້.